ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ

ປະຈຳປີ 2018

ວັນອັງຄານ, 30 ເມສາ 2019

ເວລາ 09:00 ໂມງ

ທີ່ ໂຮງແຮມ ຄຣາວພາຊາ, ຖະໜົນ ສາມແສນໄທ

ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເລກທີ 055/ລອທ
ນະຄອນຫຼວງວຽງຈັນ, ວັນທີ 23 ເມສາ 2019

ໜັງສືເຈ້ຶງເຊີນ

ຮຽນ : ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018

- ອີງຕາມກົດລະບຽບ ບໍລິສັດ ລາວອາໂກຣເທັກ ມະຫາຊົນ
- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງທີ 1 ວັນທີ 15 ມີນາ 2019

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຂໍຖືເປັນກຽດຮຽນເຊີນ ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນວັນທີ 30 ເມສາ 2019 ເວລາ 09:00 ໂມງ (ເລີ່ມລົງທະບຽນເວລາ 08:00 ໂມງ) ທີ່ Crowne Plaza Vientiane, ຖະໜົນ ສາມແສນໄທ, ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ໄດ້ຮັດຕິດມາພ້ອມນີ້.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ແຈ້ງໃຫ້ ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 29 ມີນາ 2019 ເປັນມື້ປິດປັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018. ສະນັ້ນ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນຈາກ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດຕັ້ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດເກໂຄດ) ພ້ອມເອກະສານຄັດຕິດຕ່າງໆ ປຸ໋ ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ທ່ານ ສະພິສັດ ຈຸຈິງດຳຈອນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເອກະສານປະກອບໜັງສືເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2018

1. ໜັງສືເຊີນປະຊຸມຜູ້ຖືຮຸ້ນ
2. ວາລະກອງປະຊຸມ
3. ໃບມອບສິດ
4. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
5. ຄຳແນະນຳກ່ຽວກັບການລົງຄະແນນສຽງ
6. ເອກະສານປະກອບວາລະທີ 1 ບົດລາຍງານການດຳເນີນທຸລະກິດປະຈຳ ປີ 2018
7. ເອກະສານປະກອບວາລະທີ 2 ບົດລາຍງານການເງິນ ປະຈຳປີ 2018
8. ເອກະສານປະກອບວາລະທີ 3 ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019
9. ເອກະສານປະກອບວາລະທີ 6 ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
10. ແຜນທີ່ສະຖານທີ່ຈັດກອງປະຊຸມ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ໝາຍເຫດ:

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນ, ຖະໜົນ ກຳແພງເມືອງ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ, ໂທລະສັບ: (856-21) 454361-4, ແຟັກສ໌: (856- 21) 454 361-4 ຫຼື ຕິດຕໍ່ ທ່ານ ອາລຸນໄຊ ນະໄພ ວົງ, ໂທລະສັບ: (856-20) 556 256 51;

2. ສຳລັບທ່ານຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນ ຕ່າງປະເທດ) ມາໃນວັນປະຊຸມເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;

3. ສຳລັບທ່ານຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ ກະລຸນາປະກອບຂໍ້ມູນ ແລະ ລົງ ລາຍເຊັນໃນ **ໃບມອບສິດ** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;

4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍ ລະອຽດທີ່ໄດ້ລະບຸໄວ້ໃນທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງ ປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;

5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດເຂົ້າຮ່ວມກອງປະຊຸມ ແລະ ລົງ ຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ເລືອກເອົາສະມາຊິກສະພາບໍລິຫານ ອິດສະຫຼະຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານຕິດຂັດ ສົ່ງເຖິງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ສຳນັກງານຕັ້ງຢູ່ ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງ ຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 29 ເມສາ 2019, ກະລຸນາເບິ່ງເອກະສານຕິດຂັດ ເລື່ອງເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການ ລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ.

6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມ ທ່ານ ສາມາດ ສອບຖາມ ທ່ານ ນາງ ພຸດສະດີ ທະນົງໃຈ ໂທ: (856-20) 591 111 34 ໃນໂມງລັດຖະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ວາລະທີ 1 ພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 154 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງບໍລິສັດ" ລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ແມ່ນມີລາຍລະອຽດໃນເອກະສານຕິດຂັດ (ເອກະສານປະກອບວາລະທີ 1).

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ເຊິ່ງໄດ້ຜ່ານການພິຈາລະນາຈາກສະພາບໍລິຫານແລ້ວ.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2 ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 154 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາເອກະສານລາຍງານການເງິນປະຈຳປີຂອງບໍລິສັດ" ໂດຍເອກະສານລາຍງານການເງິນປະຈຳປີ 2018 ແມ່ນມີລາຍລະອຽດໃນເອກະສານຕິດຂັດ (ເອກະສານປະກອບວາລະທີ 2).

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາເອກະສານລາຍງານການເງິນປະຈຳປີ 2018 ເຊິ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານ ແລະ ຜ່ານການກວດສອບຈາກຜູ້ກວດສອບບັນຊີແລ້ວ.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 154 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ" ໂດຍແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ແມ່ນມີລາຍລະອຽດໃນເອກະສານຕິດຂັດ (ເອກະສານປະກອບວາລະທີ 3).

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ເຊິ່ງໄດ້ຜ່ານການພິຈາລະນາຂອງຄະນະອຳນວຍການ ແລະ ສະພາບໍລິຫານແລ້ວ.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 ພິຈາລະນາ ແລະ ຮັບຮອງໃຫ້ ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2018.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 155 ກຳນົດໃຫ້ "ການບໍ່ຈ່າຍເງິນປັນຜົນແມ່ນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຫຸ້ນ ກ່ອນ" ເນື່ອງຈາກບໍລິສັດຈະໃຊ້ເປັນເງິນທຶນໝຸນວຽນສຳຫຼັບການດຳເນີນງານໃນ ປີ 2019.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ມີການພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງໃຫ້ ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2018.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 154 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ກຳນົດເອົາຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ".

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຸບເປີສ(ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co.,Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າບໍລິການເປັນຈຳນວນບໍ່ກາຍ 41,000ໂດລາສະຫະລັດ. ເນື່ອງຈາກ ບໍລິສັດ ພຣາຍສວໍເຈີເຮົ້າສກຸບເປີສ(ລາວ) ຈຳກັດຜູ້ດຽວ ແມ່ນຜູ້ກວດສອບບັນຊີໃຫ້ແກ່ບໍລິສັດມາແຕ່ການຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ວາລະທີ 6 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານ.

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາທີ 154 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ແຕ່ງຕັ້ງສະມາຊິກສະພາບໍລິຫານ" ໂດຍລາຍລະອຽດຊີ້ຈະປະຫວັດຫຍໍ້ແມ່ນໃນເອກະສານຕິດຂັດ (ເອກະສານປະກອບວາລະທີ 6).

ຄຳເຫັນຂອງສະພາບໍລິຫານ: ເຫັນດີໃຫ້ຜູ້ຖືຮຸ້ນແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດເດີມ ສືບຕໍ່ປະຕິບັດວຽກງານເປັນສະພາບໍລະຫານຂອງບໍລິສັດໃນປີ 2019, ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ອະພິສິດ ຮຸຈິກຽດກຳຈອນ ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
2. ທ່ານ ນາງ ຄຳແພງ ພັດທະດາວົງ ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
3. ທ່ານ ເສດ ພັດທະນະມາດ ສະມາຊິກສະພາບໍລິຫານ
4. ທ່ານ ອຸດົມ ແກ້ວທະວົງ ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
5. ທ່ານ ນາງ ດວງສະໄໝ ເລົ່າຟຸງ ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7 ເລື່ອງອື່ນໆ (ຖ້າມີ).

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວມາຂ້າງຕົ້ນນັ້ນ ສະມາຊິກອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນ ສຳຫຼັບການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ທາງບໍລິສັດຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີພະຍານ ແລະ ຊ່ວຍດູແລກວດສອບໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສ ຕາມກົດລະບຽບຂອງບໍລິສັດ ແລະ ກົດໝາຍທີ່ກ່ຽວຂ້ອງໃນ ສປປ ລາວ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ໃບມອບສິດ
Proxy

1. ຂ້າພະເຈົ້າ/(**I/we**).....ສັນຊາດ/**Nationality**.....

   ບັດປະຈຳຕົວເລກທີ່/**Passport number**:.....

   ທີ່ຢູ່ປະຈຸບັນ/ **Current address**:.....

   ເບີໂທລະສັບ/**Telephone No**.:.....

   ອີເມວ/**Email**.....

   ເປັນຜູ້ຖືຮຸ້ນບໍລິສັດ ລາວ ອາໂກຣເທັກ ມະຫາຊົນ (ລອທ)

   Being a shareholder of Lao Agrotech Public Company (LAT)

   ມີຮຸ້ນທີ່ຖືຈຳນວນ.....ຮຸ້ນ ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

   Holding a total number of ..... shares which are equivalent to the same number of votes

2. ຂໍມອບໝາຍ ທ່ານ/ **Hereby assign Mr/Ms** .....ອາຍຸ/**age**.....

   ບັດປະຈຳຕົວເລກທີ່/**Passport number**:.....

   ທີ່ຢູ່ປະຈຸບັນ/**Current address**:.....

   ເບີໂທລະສັບ/Telephone **No**.: .....

   ອີເມວ/**Email**.....

   ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2018 ຂອງ ລອທ ທີ່ຈະຈັດຂຶ້ນໃນເວລາ 09:00ໂມງ ຂອງວັນທີ 30 ເມສາ 2019.

   To be my/our proxy to attend and vote on my/our behalf in the Annual General Shareholders' meeting for year 2018 of the LAT which will be held at 09:00 am on 30 April 2019.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້):

I/We authorize the proxy to vote on my/our behalf in the Meeting as follows (choose one from the two following options):

☐ **1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື**

To grant the proxy to consider and vote in all agendas on my/our behalf as the proxy may deem appropriate; or

☐ **2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາລົງຄະແນນ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆວາລະລຸ່ມນີ້):**

To grant the proxy to vote as per my/our intention indicated in the followings (if you select this option, please choose to vote either approve or disapprove in ever agenda):

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

Agenda 1: To consider and adopt the business operating result of the company for 2018.

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprover**

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018.

Agenda 2: To consider and adopt the financial statements of the company for 2018

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprove**

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019.

Agenda 3: To consider and adopt the business plan of the company for 2019.

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprove**

ວາລະທີ 4: ພິຈາລະນາ ແລະ ຮັບຮອງໃຫ້ ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2018.

Agenda 4: To consider no dividend payments from the operation of the company in 2018.

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprove**

ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019.

Agenda 5: To consider and appoint the external auditor and determine a remuneration of external auditor for the year 2019.

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprove**

ວາລະທີ 6: ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານ.

Agenda 6: To consider the appointment of the members of the Board of Directors.

- ☐ ເຫັນດີ/ **approve**
- ☐ ບໍ່ເຫັນດີ / **disapprove**

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

   In case I/We have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

   Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ ourselves in all respects.

ທີ່/ **Wrote at**.....ວັນທີ/**date**.....2019

ເຊັນຜູ້ຖືຮຸ້ນທີ່ມອບໝາຍ /**Signed by the shareholder**

_____

ເຊັນຜູ້ຕາງໜ້າ / Signed by the proxy

_____

ໝາຍເຫດ/ Remark

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ.

   The shareholder is required to assign only one proxy to attend and vote in the meeting on the shareholder's behalf.

2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ລອທ ມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.

   This Proxy must be certified by your most convenient Court Notary Office to ensure its legal validity. LAT may reject any Proxies or proxy authorizations without endorsement of the Court Notary Office.

3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

   The proxy must present to the officers at registration desk his/her valid ID Card, or Family book or Passport (in case of foreign investor) together with the copies of the same documents of the shareholder, this Proxy, and the invitation to the Meeting.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະໜັກໂຕເພື່ອເຂົ້າຮ່ວມກອງປະຊຸມ

Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2018 ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ), ຜູ້ຖືຮຸ້ນ ແລະ ຜູ້ຕ່າງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນາມານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Annual General Shareholders' Meeting for the Year 2018 of Lao Agrotech Public Company (LAT), shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange (LSX) and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ /Individual attendee

   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

   Shall present one of the following documents of their won at the time of registration

   1.1 ບັດປະຈຳຕົວ/ Identification card

   1.2 ສຳມະໂນຄົວ/Family book

   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/Passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ/ Entity attendees

   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

   Shall present one of the documents as given in the 1 above plus one of the following documents at the time of registration:

   2.1 ໃບອະນຸຍາດລົງທຶນ/Investment license

   2.2 ໃບທະບຽນວິສະຫະກິດ/ Certificate of Enterprise Registration

   2.3 ໃບທະບຽນອາກອນສະບັບຫຼ້າສຸດ/Recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດ ມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດ ຫຼື ພາສາໄທເທົ່ານັ້ນ. ລອທ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English and Thai. LAT has the right to reject any documents contradicting this provision.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຄຳແນະນຳກ່ຽວກັບການລົງຄະແນນສຽງ

Instruction for vote

1. ຜູ້ເຂົ້າຮ່ວມປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ, ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ຜູ້ມອບໝາຍສິດ ໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນສຽງໃນແຕ່ລະວາລະ ລອຜ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.
   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, LAT will record such voted at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈະເປັນຕ້ອງລົງຄະແນນສຽງໃດໆ).
   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote.

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ, ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ລອຜ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of LAT shares you are holding and mark a cross in the Disapprove box.

4. ຫຼັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ
   After you have clearly casted your vote, kingly raise your hand with the ballot, so the organizers can take the ballot and count the votes.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບການນັບຄະແນນໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ລອທ ທັງໝົດໃນທີ່ປະຊຸມ
   The Disapproval votes will become effective only if such votes account for more than half of the total number of LAT attending the meeting.

ໝາຍເຫດ/Remark:

1. **ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.**
   Any attendees who failed to make registration will not be eligible to votes.
2. **ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.**
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259


ເອກະສານປະກອບວາລະທີ 1 ຜົນການດຳເນີນທຸລະກິດປະຈຳ ປີ 2018

❖ ລາຍງານຜົນການດຳເນີນທຸລະກິດປະຈຳປີ 2018

ບໍລິສັດປະກອບທຸລະກິດທາງດ້ານອຸດສາຫະກຳການກະເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ການຜະລິດພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດນຳມາແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້, ພືດນ້ຳມັນທີ່ບໍລິສັດ ໄດ້ພັດທະນາໃຫ້ເປັນທຸລະກິດຫຼັກແມ່ນ ປາມນ້ຳມັນ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ ເປັນຜູ້ນຳດ້ານອຸດສະຫະກຳປາມພຽງໜຶ່ງດຽວໃນ ສປປ ລາວ, ບໍລິສັດໄດ້ມີການວິໄຈ ແລະ ພັດທະນາພັນຕົ້ນປາມທີ່ເໝາະກັບສະພາບອາກາດຂອງລາວ, ໄດ້ເລີ່ມມີການວິໄຈຕັ້ງແຕ່ປີ 2008 ເປັນຕົ້ນມາ ໂດຍມີການທົດລອງຢ່າງເປັນລະບົບ ຈົນມາເຖິງປີ 2010 ຈຶ່ງສາມາດພັດທະນາສາຍພັນທີ່ເຂົ້າກັບສະພາບດິນຟ້າອາກາດໃນ ສປປ ລາວ ເຊິ່ງພັນປາມດັ່ງກ່າວບໍລິສັດໄດ້ຕັ້ງຊື່ວ່າ ພັນລາວຽງ ເປັນແນວພັນທີ່ສາມາດທົນກັບສະພາບອາກາດຂອງລາວ ໄດ້ເປັນຢ່າງດີ, ເປັນພັນທີ່ມີຄຸນນະພາບສູງ. ບໍລິສັດເປັນໜຶ່ງດຽວໃນການພັດທະນາອຸດສະຫະກຳປາມໃນ ສປປ ລາວ ເຊິ່ງເຮັດໃຫ້ບໍລິສັດມີຜະລິດຕະພັນ ແລະ ບໍລິການຫຼາຍໆຢ່າງທີ່ກ່ຽວຂ້ອງກັບປາມນ້ຳມັນ ເຊັ່ນ: ເມັດພັນປາມ, ຕົ້ນກ້າປາມ, ນ້ຳມັນປາມດິບ, ນ້ຳມັນກາຊວນຊີວະພາບ, ການໃຫ້ບໍລິການປູກປາມ, ການບໍລິການດູແລຮັກສາສວນປາມເປັນຕົ້ນ. ບໍລິສັດມີແຜນທີ່ຈະຜະລິດນ້ຳມັນພືດເອງ ໂດຍການສ້າງໂຮງກັ່ນນ້ຳມັນປາມ ແຕ່ເນື່ອງຈາກວ່າວັດຖຸດິບທີ່ຜະລິດໄດ້ໃນປະເທດຍັງບໍ່ພຽງພໍ, ບໍລິສັດຈຶ່ງໄດ້ນຳເຂົ້ານ້ຳມັນພືດສຳເລັດຮູບມາຈຳໜ່າຍເພື່ອສ້າງຖານການຕະຫຼາດໄວ້ກ່ອນທີ່ຈະມີການແປຮູບຜະລິດຕະພັນສຳເລັດຮູບຂອງຕົນເອງ, ພ້ອມທັງເປັນການເປີດທຸລະກິດນຳເຂົ້າສິນຄ້າອຸປະໂພກບໍລິໂພກເຂົ້າມາຈຳໜ່າຍໃນ ສປປ ລາວ. ສິນຄ້າທີ່ນຳເຂົ້າມາຈຳໜ່າຍປະກອບມີ: ນ້ຳມັນພືດກາຄຳ, ນ້ຳມັນພືດກາກຸ້ງມັງກອນ ແລະອື່ນໆ.

1.ການຜະລິດແລະຈຳໜ່າຍ.

ໃນປີ 2018 ບໍລິສັດມີການຜະລິດ ແລະ ຈຳໜ່າຍຜະລິດພັນດັ່ງຕໍ່ໄປນີ້:



ປີ- 2018	ມູນຄ່າ (ລ້ານກີບ)
ນ້ຳມັນກະຊວນ B5	34,364.91
ນ້ຳມັນ CPO	4,100.74
ນ້ຳມັນ Cooking Oil	4,002.19
ຕົ້ນກ້າ	1,895.76
ນ້ຳມັນ B100	204.55
ປຸ໋ຍ	621.30
ແປ້ງມັນ	193.08
ແນວພັນສາລີ	124.90
ອື່ນ ໆ ສວນ	15.86
ລວມ	**45,523.28**


2. ຜົນການດຳເນີນທຸລະກິດ.

ລາຍໄດ້ລວມ (ລ້ານກີບ)




ບໍລິສັດມີລາຍໄດ້ໃນປີ 2017 ເທົ່າກັບ 55,381 ລ້ານກີບຊຶ່ງໃນນີ້ມີລາຍໄດ້ຈາກການການບໍລິການສອນແລະຕົ້ນກ້າປາມຈຳນວນ 5,658.67 ລ້ານກີບ, ລາຍໄດ້ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 36,779.78 ລ້ານກີບ ແລະລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບຈຳນວນ 12,942.00 ລ້ານກີບ ໃນປີ 2018 ບໍລິສັດມີລາຍໄດ້ລວມ 45,523.00 ລ້ານກີບຊຶ່ງໃນນີ້ມີລາຍໄດ້ຈາກການການບໍລິການສອນແລະຕົ້ນກ້າປາມຈຳນວນ 1,895.76 ລ້ານກີບ ຊຶ່ງຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66,55%, ລາຍໄດ້ ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 39,291.50 ລ້ານກີບ ເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 6,83% ແລະ ລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບ 4,336.02 ລ້ານກີບຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66,50% ສະຫຼຸບລວມລາຍໄດ້ປີ 2018 ຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 17,80%.

ກຳໄລ - ຂາດທຶນ (ລ້ານກີບ)



ບໍລິສັດມີກຳໄລໃນປີ 2017 ເທົ່າກັບ 4,039.87 ຄິດເປັນອັດຕາເທົ່າກັບ 7,29% ເມື່ອທຽບກັບລາຍໄດ້ລວມ ແລະໃນປີ 2018 ບໍລິສັດມີກຳໄລເທົ່າກັບ 613.97 ລ້ານກີບ ຄິດເປັນອັດຕາເທົ່າກັບ 1,32% ເມື່ອທຽບກັບລາຍໄດ້ລວມ ບໍລິສັດມີກຳໄລຫຼຸດລົງເນື່ອງຈາກຍອດ ການຈຳໜ່າຍສິນຄ້າຫຼຸດລົງ.

ສິນຊັບລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີສິນຊັບລວມເທົ່າກັບ 58,451.52 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສິນຊັບລວມ ເທົ່າກັບ 69,754.35 ລ້ານກີບຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 19,34% ເມື່ອທຽບກັບສິນຊັບລວມ ບໍລິສັດມີການລົງທຶນໃນ ທີ່ດິນ, ອາຄານໂຮງງານ, ທັງໃນເຂດພື້ນທີ່ ສວນເມືອງນາຊາຍທອງ, ສວນສາລະວັນ ແລະ ສວນແອ໊ດຊ້າງ.


ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ໜີ້ສິນລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີໜີ້ສິນລວມເທົ່າກັບ 12,593.24 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີໜີ້ສິນລວມເທົ່າກັບ 10,012.63 ລ້ານກີບຊຶ່ງລົດລົງຈາກປີ 2017 ໃນອັດຕາເທົ່າກັບ 20,49% ເມື່ອທຽບກັບໜີ້ສິນລວມຊຶ່ງໜີ້ສ່ວນໃຫຍ່ຂອງ ບໍລິສັດ ເປັນເຈົ້າໜີ້ການຄ້າ.

ສ່ວນຂອງຜູ້ຖືຮຸ້ນລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 45,585.28 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 59,471.72 ລ້ານກີບ ຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາ ເທົ່າກັບ 31,04% ເມື່ອທຽບກັບສ່ວນຂອງຜູ້ຖືຮຸ້ນລວມ ທັງ ນີ້ເນື່ອງຈາກບໍລິສັດມີການຈຳໜ່າຍຮຸ້ນເພີ່ມທຶນເມື່ອວັນທີ 17 ສິງຫາ 2018 ຈຳນວນ 20,000,000 ຮຸ້ນ

ກະແສເງິນສົດລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີກະແສເງິນສົດໃນ ມືເທົ່າກັບ 3,572.46 ລ້ານກີບໃນນີ້ມີກະແສເງິນສົດເຂົ້າຈາກ ການດຳເນີນງານ ເທົ່າກັບ 5,811.17 ລ້ານກີບ ມີກະແສ ເງິນສົດອອກຈາການກິດຈະກຳການລົງທຶນ ເທົ່າກັບ (3,621.72 ລ້ານກີບ) ແລະ ວັນທີ 31 ທັນວາ 2018 ບໍລິສັດມີເງິນສົດໃນມືເທົ່າກັບ 4,823.43 ລ້ານກີບໃນນີ້ມີ ກະແສເງິນສົດອອກຈາກການດຳເນີນງານ ເທົ່າກັບ (6,524.50 ລ້ານກີບ) ມີກະແສເງິນສົດອອກຈາກກິດຈະກຳການລົງທຶນ ເທົ່າກັບ (5,951.75 ລ້ານກີບ) ແລະມີກະແສເງິນສົດເຂົ້າຈາກການກິດຈະກຳການເງິນ ເທົ່າກັບ 13,696.14 ລ້ານກີບ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

Lao Agro Tech Public Company

ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ: 021 520 715, ແຟັກ: 021 256 259

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານສະຖານະການເງິນ
ສິ້ນສຸດ ວັນທີ 31 ທັນວາ 2018

ເອກະສານປະກອບວາລະທີ 2

	2018 ກີບ	2017 ກີບ
ຊັບສິນ		
ຊັບສິນໝຸນວຽນ		
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4.823.430.665	3.571.461.291
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	16.577.627.158	13.672.665.552
ເຄື່ອງໃຊ້ສຳ. ສຸດທິ	865.481.946	264.901.299
ວັດສະດຸສະໜອງ. ສຸດທິ	906.316.624	577.326.228
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ	1.999.044.052	502.229.515
ຊັບສິນໝຸນວຽນອື່ນໆ	1.794.965.888	322.336.928
ລວມຊັບສິນໝຸນວຽນ	**26.966.866.333**	**18.910.920.813**
ຊັບສິນບໍ່ໝຸນວຽນ		
ຊັບສິນບັດຄົງທີ່ ມີຕົວຕົນ. ສຸດທິ	20.280.020.977	17.294.354.033
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ. ສຸດທິ	22.507.458.490	22.246.242.852
ລວມຊັບສິນບໍ່ໝຸນວຽນ	**42.787.479.467**	39.540.596.885
ລວມຊັບສິນ	**69.754.345.800**	**58.451.517.698**
ໜີ້ສິນ ແລະ ທຶນ		
ໜີ້ສິນ		
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	9.218.844.391	10,804,535,371
ໜີ້ສິນໝຸນວຽນອື່ນໆ	367.107.838	1,788,703,955
ເງິນກູ້ຢືມໄລຍະສັ້ນ	426674.639	-
ລວມໜີ້ສິນ	**10.012.626.868**	**12,593,239,326**
ທຶນ		
ທຶນຕົ້ນເອງຂອງຜູ້ຖືຮຸ້ນ	50.000.000.000	40.000.000.000
ສ່ວນເພີ່ມທຶນ	3.269.466.406	-
ກຳໄລສະສົມ		
ແບ່ງປັນ - ຄ້າງສະສົມຕາມລະບຽບການ	887.496.413	826.098.998
ກຳໄລສະສົມລໍຖ້າແບ່ງປັນ	5.584.756.113	5.032.179.374
	59.741.718.932	**45.858.278.372**
ລວມໜີ້ສິນ ແລະ ທຶນ	**69.754.345.800**	**58.451.517.698**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: ມີນາ 2019

ທ່ານ ວັນສະໜຶ່ມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: ມີນາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 22 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

DRAFT

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ສິ້ນສຸດ ວັນທີ 31 ທັນວາ 2018

ເອກະສານປະກອບວາລະທີ 2

	2018 ກີບ	2017 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ	45,523,277,934	55.381.061.238
ຕົ້ນທຶນໃນການຂາຍ	(38,510,797,543)	(43.392.773.662)
ກຳໄລລວມ	**7,012,480,391**	**11.988.287.576**
ລາຍຈ່າຍການຂາຍ ແລະ ບໍລິຫານ	(5,836,303,968)	(5.194.255.232)
ລາຍຮັບອື່ນໆ	76.292.749	25.882.314
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນ	(445.532.695)	(1.426.980.907)
ກຳໄລ/(ຂາດທຶນ)ຈາກການດຳເນີນງານກ່ອນ ອາກອນກຳໄລ	**806.936.477**	**5.624.933.751**
ອາກອນກຳໄລ	(192.962.323)	(1.585.065.316)
ກຳໄລ/(ຂາດທຶນ)ສຸດທິສຳລັບປີ	**613.974.154**	**4.039.868.435**
ກຳໄລຕໍ່ຮຸ້ນ		
ກຳໄລຕໍ່ຮຸ້ນພື້ນຖານ	7	78

DRAFT

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: ມີນາ 2019

ທ່ານ ວັນສະໜຸມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: ມີນາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 22 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນເຮືອນຫຸ້ນຂອງຜູ້ຖືຮຸ້ນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

	ທຶນຈົດທະບຽນ	ສ່ວນເພີ່ມທຶນ	ກຳໄລສະສົມ		
			ຖ້ຽນສຳຫລັບຊຳລະ ການ	ກຳໄລສະສົມຄົງຄ້ຳ ແປ່ງປັນ	ລວມ
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາໃນວັນທີ 1 ມັງກອນ 2017	40.000.000.000	-	422.112.154	1.396.297.783	41.818.409.937
ກຳໄລ/(ຂາດທຶນ)ໃນປີ	-	-	-	4.039.868.435	4.039.868.435
ຖ້ຽນສະສົມການລະບຽບການ(ປົດລະທຶນຍ້ອນທີ່ 16)	-	-	403.986.844	(403.986.844)	-
ຍອດຫຼືອກ້ຳຍປີ ວັນທີ 31 ທັນວາ 2017	**40.000.000.000**	**-**	**826.098.998**	**5.032.179.374**	**45.858.278.372**
ຍອດຍົກມາໃນວັນທີ 1 ມັງກອນ 2018	40.000.000.000	-	826.098.998	5.032.179.374	45.858.278.372
ກຳໄລ/(ຂາດທຶນ)ໃນປີ	-	-	-	613.974.154	613.974.154
ອອກຮຸ້ນສາມັນ (Note 15)	10.000.000.000	3.269.466.406	-	-	13.269.466.406
ຖ້ຽນສະສົມການລະບຽບການ(ປົດລະທຶນຍ້ອນທີ່ 16)	-	-	61.397.415	(61.397.415)	-
ຍອດຫຼືອກ້ຳຍປີ ວັນທີ 31 ທັນວາ 2018	**50.000.000.000**	**3.269.466.406**	**887.496.413**	**5.584.756.113**	**59.741.718.932**

ທ່ານ ຈຸ້ມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: ມີນາ 2019

ທ່ານ ວັນສຸນຫຼົ້ມ ສີສຸລໍານັ້ງ
ຫົວໜ້າບັນຊີ - ການເງິນ
ວັນທີ: ມີນາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 22 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

ເອກະສານປະກອບວາລະທີ 2

	2018 ກີບ	2017 ກີບ
ກຳໄລກ່ອນເສຍອາກອນ	**806.936.478**	**5.624.933.751**
ລາຍການປັບປຸງ::		
ຄ່າຫຼຸ້ຍຫ້ຽນ	1.751.650.811	1.513.949.093
ຄ່າຕັດຣອນ	832.077.389	91.159.781
ສະສາງຊັບສິນບັດຄົງທີ່ອອກ	-	2.364.877
ກຳໄລຈາກອັດຕາແລກປ່ຽນ	194.212.523	786.262.974
ລາຍຈ່າຍອາກອນກຳໄລ		
ການປ່ຽນແປງຈາກ ທຶນໝຸນວຽນ:		
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	(2.904.961.606)	(5.748,922.731)
ເຄື່ອງໃນສາງ. ສຸດທິ	(600.580.647)	337.484.176
ວັດສະດຸສະໜອງ. ສຸດທິ	(328.990.396)	(255.412.573)
ຄ່າເຍື່ອນຊຳລະໃນການປູກ - ເບ້ຍຕົ້ນປາມສຳລັບຂາຍ	(1.496.814.537)	103.419.483
ຊັບສິນໝຸນວຽນອື່ນໆ	(1.472.628.960)	(236.622.154)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	(1.690.844.639)	4.775.755.536
ໜີ້ສິນໝຸນວຽນອື່ນໆ	(77.235.125)	115.144.518
ກະແສເງິນສົດຈາກກິດຈະກຳການດຳເນີນງານ	**(4.987.178.709)**	**7.109.516.731**
ອາກອນລາຍໄດ້	(1.537.323.316)	(1.298.349.643)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ	**(6.524.502.025)**	**5.811.167.088**
ກະແສເງິນສົດຈາກກິດຈະກຳການລົງທຶນ		
ຊື້ຊັບສິນບັດຄົງທີ່	(4.858.460.764)	(2.283.377.726)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ	(1.093.293.027)	(1.338.349.825)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ	**(5.951.753.791)**	**(3.621.727.551)**
ກະແສເງິນສົດຈາກກິດຈະກຳການເງິນ		
ຮັບເງິນກູ້ໄລຍະສັ້ນ	426.674.639	-
ເງິນສົດຮັບຈາກການອອກຮຸ້ນສາມັນ	13.269.466.406	-
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ	13.696.141.045	-
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	**1.219.885.229**	**2.189.439.537**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	3.571.461.291	1.363.578.036
ຂາດທຶນຈາກການແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	32.084.145	18.443.718
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	**4.823.430.665**	**3.571.461.291**
ລາຍການສຳລັບທີ່ບໍ່ແມ່ນເງິນສົດ:		
ການໄດ້ມາຂອງຊັບສິນທີ່ຍັງບໍ່ໄດ້ຊຳລະ	1.018.171.479	1.139.314.488

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: ມີນາ 2019

ທ່ານ ວັນສະໜຸມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: ມີນາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 22 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ


ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເອກະສານປະກອບວາລະທີ 3 ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019

ບໍລິສັດປະກອບທຸລະກິດທາງດ້ານອຸດສາຫະກຳການກະເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ການຜະລິດພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດນຳມາແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້, ພືດນ້ຳມັນທີ່ບໍລິສັດ ໄດ້ພັດທະນາໃຫ້ເປັນທຸລະກິດຫຼັກແມ່ນ ປາມນ້ຳມັນ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ ເປັນຜູ້ນຳດ້ານອຸດສະຫະກຳປາມພຽງໜຶ່ງດຽວໃນ ສປປ ລາວ, ບໍລິສັດໄດ້ມີການວິໄຈ ແລະ ພັດທະນາພັນຕົ້ນປາມທີ່ເໝາະກັບສະພາບອາກາດຂອງລາວ, ໄດ້ເລີ່ມມີການວິໄຈຕັ້ງແຕ່ປີ 2008 ເປັນຕົ້ນມາ ໂດຍມີການທົດລອງຢ່າງເປັນລະບົບ ຈົນມາເຖິງປີ 2010 ຈຶ່ງສາມາດພັດທະນາສາຍພັນທີ່ເຂົ້າກັບສະພາບດິນຟ້າອາກາດໃນ ສປປ ລາວ ເຊິ່ງພັນປາມດັ່ງກ່າວບໍລິສັດໄດ້ຕັ້ງຊື່ວ່າ ພັນລາວຽງ ເປັນແນວພັນທີ່ສາມາດທົນກັບສະພາບອາກາດຂອງລາວ ໄດ້ເປັນຢ່າງດີ, ເປັນພັນທີ່ມີຄຸນນະພາບສູງ. ບໍລິສັດເປັນໜຶ່ງດຽວໃນການພັດທະນາອຸດສະຫະກຳປາມໃນ ສປປ ລາວ ເຊິ່ງເຮັດໃຫ້ບໍລິສັດມີຜະລິດຕະພັນ ແລະ ບໍລິການຫຼາຍໆຢ່າງທີ່ກ່ຽວຂ້ອງກັບປາມນ້ຳມັນ ເຊັ່ນ: ເມັດພັນປາມ, ຕົ້ນກ້າປາມ, ນ້ຳມັນປາມດິບ, ນ້ຳມັນກາຊວນຊີວະພາບ, ການໃຫ້ບໍລິການປູກປາມ, ການບໍລິການດູແລຮັກສາສວນປາມເປັນຕົ້ນ. ບໍລິສັດມີແຜນທີ່ຈະຜະລິດນ້ຳມັນພືດເອງ ໂດຍການສ້າງໂຮງກັ່ນນ້ຳມັນປາມ ແຕ່ເນື່ອງຈາກວ່າວັດຖຸດິບທີ່ຜະລິດໄດ້ໃນປະເທດຍັງບໍ່ພຽງພໍ, ບໍລິສັດຈຶ່ງໄດ້ນຳເຂົ້ານ້ຳມັນພືດສຳເລັດຮູບມາຈຳໜ່າຍເພື່ອສ້າງຖານການຕະຫຼາດໄວ້ກ່ອນທີ່ຈະມີການແປຮູບຜະລິດຕະພັນສຳເລັດຮູບຂອງຕົນເອງ, ພ້ອມທັງເປັນການເປີດທຸລະກິດນຳເຂົ້າສິນຄ້າອຸປະໂພກບໍລິໂພກເຂົ້າມາຈຳໜ່າຍໃນ ສປປ ລາວ. ສິນຄ້າທີ່ນຳເຂົ້າມາຈຳໜ່າຍປະກອບມີ: ນ້ຳມັນພືດກາຄຳ, ນ້ຳມັນພືດກາກຸ້ງມັງກອນ ແລະອື່ນໆ.

1.ການຜະລິດແລະຈຳໜ່າຍ

ໃນປີ 2019 ບໍລິສັດມີແຜນການຜະລິດແລະຈຳໜ່າຍຜະລິດພັນດັ່ງຕໍ່ໄປນີ້:



ປີ-2019	ມູນຄ່າ (ລ້ານກີບ)
ນ້ຳມັນກະຊວນ B5	95,256.00
ນ້ຳມັນ CPO	2,619.00
ນ້ຳມັນ Cooking Oil	4,050.00
ຕົ້ນກ້າ	3,213.00
ນ້ຳມັນ B100	1,350.00
ປຸ໋ຍ	1,274.94
ແປ້ງມັນ	2,380.45
ແນວພັນສາລີ	2,106.00
ອື່ນ ໆ ສອນ	
ລວມ	**112,249.39**

2. ການລົງທຶນ ແລະ ການຂະຫຍາຍການຜະລິດແລະການຈຳໜ່າຍ.

1. ແຜນການຜະລິດ ແລະ ການຈຳໜ່າຍຜະລິດຕະພັນຂອງບໍລິສັດ.
   - ແຜນໃນການສົ່ງເສີມການນຳໃຊ້ນ້ຳມັນກາຊວນຊີວະພາບ ທາງບໍລິສັດໄດ້ເນັ້ນຈຳໜ່າຍໃຫ້ຜູ້ບໍລິໂພກໂດຍກົງ ເຈາະກຸ່ມລູກຄ້າທີ່ນຳໃຊ້ນ້ຳມັນກາຊວນ ເຊັ່ນ: ໂຄງການຕ່າງໆທີ່ປັດຈຸບັນມີເພີ່ມຂຶ້ນຈຳນວນຫຼາຍ, ບໍລິສັດ ຂົນສົ່ງຄົມມະນາຄົມ, ບໍລິສັດຂົນສົ່ງສິນຄ້າຕ່າງໆ ແລະອື່ນໆ ໂດຍການຕິດຕັ້ງຖັງນ້ຳມັນພ້ອມຫົວຈ່າຍໃຫ້ແກ່ ລູກຄ້າ.
   - ຜະລິດຕະພັນສຳເລັດຮູບບໍລິສັດກໍ່ໄດ້ເອົາໃຈໃສ່ໃນການຂະຫຍາຍຖານລູກຄ້າໃຫ້ໄດ້ຫຼາຍຂຶ້ນໃນທົ່ວປະເທດ.

2. ແຜນພັດທະນາທຸລະກິດ.
   - ບໍລິສັດມີແຜນຈະຂະຫຍາຍການຜະລິດນ້ຳມັນກາຊວນຊີວະພາບ 200,000 ລິດຕໍ່ວັນ ເພື່ອຕອບສະໜອງຍຸດ ທະສາດການພັດທະນາພະລັງງານທົດແທນຂອງລັດຖະບານ ໃນການນຳໃຊ້ພະລັງງານປະເພດນ້ຳມັນກາຊວນ ຊີວະພາບໃຫ້ໄດ້ 10% ພາຍໃນປີ 2025 ຊຶ່ງຈະໄດ້ມີການດຳເນີນການເຮັດບົດວິພາກເພື່ອສະເໜີລັດຖະບານ ໃນການປະກາດໃຊ້ປະເພດນ້ຳມັນກາຊວນຊີວະພາບໃຫ້ໄດ້ທົ່ວປະເທດ.
   - ຜັກດັນໃຫ້ລັດຖະບານອອກມາດຕະຖານ ແລະ ໂຄງສ້າງລາຄານ້ຳມັນກາຊວນຊີວະພາບໃນການຈຳໜ່າຍໃນປໍ້ານ້ຳມັນທົ່ວໄປ.
   - ບໍລິສັດມີແຜນເນັ້ນການສົ່ງເສີມການປູກປາມຮ່ວມກັບປະຊາຊົນໃນຮູບແບບ 2+3 ແລະ ກຸ່ມກະສິກຳໃຫ້ໄດ້ ຫຼາຍທີ່ສຸດ.
   - ສຳຫຼັບທີ່ດິນໃນແຂວງສາລະວັນ ຈຳນວນ 5,200ເຮັກຕາ, ເນື່ອງຈາກວ່າຈຸດປະສົງໃນການສຳປະທານເພື່ອປູກ ຕົ້ນປາມນັ້ນທາງລັດຖະບານໄດ້ທົບທວນການລົງທຶນຄືນໃຫມ່ ເນື່ອງຈາກເປັນພື້ນທີ່ທີ່ມີເນື້ອທີ່ໃນການສຳ ປະທານເປັນຈຳນວນຫຼາຍ, ທາງບໍລິສັດຈຶ່ງໄດ້ມີແນວຄິດປ່ຽນຮູບແບບແຜນໃນການສຳປະທານ ເພື່ອປູກຜືດ ອຸດສາຫະກຳ ໂດຍສະເພາະແມ່ນຕົ້ນໄມ້ໃຫຍ່ໄວ ເນື່ອງຈາກເຫັນວ່າລົງທຶນຕ່ຳ ແລະ ຄືນຜົນຕອບຮັບໄດ້ໄວ ກວ່າ.
   - ບໍລິສັດມີແຜນຜະລິດ ແລະ ຈຳໜ່າຍປຸ໋ຍຊີວະພາບ ຈາກກາກປາມ ແລະ ແຊງປາມ ທີ່ເກີດຈາກການຜະລິດນ້ຳ ມັນປາມດິບ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເອກະສານປະກອບວາລະທີ 6 ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ອະພິສິດ ຣຸຈິກຽດກຳຈອນ
Name – Surname	: Mr. Apisit Rujikeatkamjorn
ວັນ ເດືອນ ປີເກີດ	: 20 ກັນຍາ 1945
Date of birth	: 20 August 1945
ສັນຊາດ	: ໄທ
Nationality	: Thai
ພາສາ	: ໄທ/ອັງກິດ
Language	: Thai / English
ຕຳແໜ່ງ	: ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Chairman (Independent Member)

ປະຫວັດການສຶກສາ/ Education :

ປີ 1969	: ປະລິນຍາຕຣີ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລຂອນແກ່ນ, ປະເທດໄທ
Year 1969	: Bachelor Degree in Civil Engineering, Khonkaen University
ປີ 1975	: ມະລິນຍາໂທ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລລາມາ, ປະເທດອາເມລິກາ
Year 1975	: Master Degree in Civil Engineering, Lamar University, Texas, USA

ປະຫວັດການເຮັດວຽກ / Experience :

ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ສະຫຍາມໂກລ ບ້ອນເຮົ້ ຈຳກັດ (ມະຫາຊົນ), ປະເທດໄທ
Year 2008-Now	: Chief of the board Siam Global House Public Company Limited
ປີ 2011 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ຊີອອຍ ຈຳກັດ (ມະຫາຊົນ) , ປະເທດໄທ
Year 2011-Now	: Chief of the board Sea Oil Public Company Limited
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍໄບໂອແມດ ຈຳກັດ, ປະເທດໄທ
Year 2014-Now	: Chief of the board Asia Biomass Public Company Limited
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍກຣີນ ເອເນີຈີ ຈຳກັດ (ມະຫາຊົນ) , ປະເທດໄທ
Year 2014-Now	: Chief of the board Asia Green Energy Public Company Limited
ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ດີ ທີ ຊີ ເອັນເທີໄພຣສ໌, ປະເທດໄທ
Year 2018-Now	: Chief of the board DTC Enterprise Company Limited

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ນາງ ຄຳແພງ ພັດທະດາວົງ
Name – Surname	: Ms. Khampheng Phathavong
ວັນ ເດືອນ ປີເກີດ	: 27 ກັນຍາ 1979
Date of birth	: 27 September 1979
ສັນຊາດ	: ລາວ
Nationality	: Lao
ພາສາ	: ລາວ/ອັງກິດ
Language	: Lao / English
ຕຳແໜ່ງ	: ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Deputy Chairman (Independent Member)

ປະຫວັດການສຶກສາ/ Education :

ປີ 2002	: ປະລິນຍາຕີ, ສາຂາບໍລິຫານທຸລະກິດ
Year 2002	: Bachelor Degree in Business Administration
ປີ 2010	: ປະລິນຍາໂທ, ສາຂາບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
Year 2010	: Master of Business Administration, Financial institution National Guard
ປີ 2019	: ປະລິນຍາເອກ, ສາຂາພັດທະນາອົງກອນ ແລະ ສຳມັກທະນະມະນຸດ, ວິທະຍາໄລບູລະພາ, ປະເທດໄທ
Year 2019	: Doctoral Degree from Burapha University

ປະຫວັດການເຮັດວຽກ / Experience :

ປີ 1998 – 2001	: ເລຂານຸການ, ບໍລິສັດ ລາວໂຕໂຍຕ້າ
Year 1998-2001	: Secretary Lao Toyota Company Limited
ປີ 2001 – 2005	: ຕົວແທນຂອງ ສປປ ລາວ, ASEAN E-Learning network
Year 2001-2005	: Project Coordinator ASEAN E-Learning Network
ປີ 2007 – 2013	: ຜູ້ປະສານງານໂຄງການ, ສະຖາບັນການເມືອງ ແລະ ການປົກຄອງ
Year 2007-2013	: Consultants TMC-Lao Hydraulic Manufacturing
ປີ 2013 – 2016	: ເປັນທີ່ປຶກສາ, TMC- Lao Hydraulic Machinery Manufacturing
Year 2013-2016	: Consultants TMC-Lao Hydraulic Manufacturing
ປີ 2010 - ປະຈຸບັນ	: ຮອງປະທານ ກຸ່ມການສຶກສາ ແສງສະຫວັນ
Year 2010-Now	: Vice Chairman Committee Saengsawan Education Group
ປີ 2010 - ປະຈຸບັນ	: ຜູ້ປະເມີນອິດສະຫຼະ Education Qualify Insurance, ກະຊວງສຶກສທິການ ແລະ ກິລາ
Year 2010-Now	: Independent Appraisers Education Quality Insurance, Ministry of Education and Sports

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ: 021 520 715, ແຟັກ: 021 256 259

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ເສດ ພັດທະນະມາດ
Name – Surname	: Mr. Zait Pattanamas
ວັນ ເດືອນ ປີເກີດ	: 16 ພຶດສະພາ 1973
Date of birth	: 16 May1973
ສັນຊາດ	: ໄທ
Nationality	: Thai
ພາສາ	: ໄທ/ລາວ
Language	: Thai / Lao
ຕຳແໜ່ງ	: ສະມາຊິກສະພາບໍລິຫານ
Position	: Member

ປະຫວັດການສຶກສາ/ Education :

ປີ 1993	: ຊັ້ນສູງ, ສາຂາໄຟຟ້າສື່ສານ, ສະຖາບັນ ຊ່າງປະທຸມວັນ, ປະເທດໄທ
Year 1993	: Diploma in Electrical Engineering
ປີ 1995	: ປະລິນຍາຕຣີ, ສາຂາໄຟຟ້າສື່ສານ, ສະຖາບັນຊ່າງປະທຸມວັນ, ປະເທດໄທ
Year 1995	: Bachelor Degree in Electrical communication
ປີ 2013	: ປະລິນຍາໂທ, ສາຂາບໍລິຫານທຸລະກິດສຳລັບຜູ້ບໍລິຫານ, ມະຫາວິທະຍາໄລບູລະພາ,ປະເທດໄທ
Year 2013	: Master Degree in Business Administration
ປີ 2017 -ປະຈຸບັນ	: ກຳລັງສຶກສາ ປະລິນຍາເອກ, OD&HR, ມະຫາວິທະຍາໄລບູລະພາ, ປະເທດໄທ
Year 2017-Now	: Studying in Doctoral Degree in OD & HR, Burapha University

ປະຫວັດການເຮັດວຽກ / Experience :

ປີ 1995 – 2002	: ອາຈານສອນ, ມະຫາວິທະຍາໄລ ການຈະນະບຸລີ, ປະເທດໄທ
Year 1995 - 2002	: Teacher Kanchanaburi University.
ປີ 2003 – 2004	: ຜູ້ອຳນວຍການ, ບໍລິສັດ ໂບຣແລນ ເທັກໂນໂລຢີ ຈຳກັດ, ປະເທດໄທ
Year 2003 – 2004	: Committee Borland Technology Company Limited
ປີ 2005 – 2006	: ຜູ້ອຳນວຍການ, ບໍລິສັດ ຊີແມັດຄອບເພີເລຊັ່ນ, ຈຳກັດ ປະເທດໄທ
Year 2005 - 2006	: Committee Zemasch Corporation Company Limited
ປີ 2008 - ປະຈຸບັນ	: ຜູ້ອຳນວຍການ, ບໍລິສັດ ໂອພີຈີເທັກ ຈຳກັດ, ປະເທດໄທ
Year 2005 - Now	: Committee OPG Tech Company Limited

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ອຸດົມ ແກ້ວທະວົງ
Name – Surname	: Mr. Oudom Keothavong
ວັນ ເດືອນ ປີເກີດ	: 01 ທັນວາ 1984
Date of birth	: 01 December 1984
ສັນຊາດ	: ລາວ
Nationality	: Lao
ພາສາ	: ລາວ/ອັງກິດ
Language	: Lao / English
ຕຳແໜ່ງ	: ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
Position	: Member/Chief Executive Officer

ປະຫວັດການສຶກສາ/ Education :

ປີ 2007	: ປະລິນຍາຕຣີ, ຄະນະເຄມີສາດ, ມະຫາວິທະຍາໄລແຫ່ງຊາດ
Year 2007	: Bachelor Degree in Chemistry, National University
ປີ 2012	: ປະລິນຍາໂທ, ສາຂາບໍລິຫານທຸລະກິດ, ມະຫາວິທະຍາໄລບຶວລະພາ, ປະເທດໄທ
Year 2012	: Master Degree in Business Administration, Burapha University

ປະຫວັດການເຮັດວຽກ / Experience :

ປີ 2007 – 2010	: ວິຊາການ, ກະຊວງຊັບພະຍາກອນທຳມະສາດ ແລະ ສິ່ງແວັດລ້ອມ
Year 2007-2010 University	: Academician (Professor) Bachelor Degree in Chemistry, National
ປີ 2010 - ປະຈຸບັນ	: ຜູ້ອຳນວຍການໃຫຍ່, ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Year 2010-Now	: Committee Lao Agrotech Public Company

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ນາງ ດວງສະໄໝ ເລົ່າຝຸງ
Name – Surname	: Ms. Douangsamay Laofoung
ວັນ ເດືອນ ປີເກີດ	: 14 ກໍລະກົດ 1960
Date of birth	: 14 July 1960
ສັນຊາດ	: ລາວ
Nationality	: Lao
ພາສາ	: ລາວ/ອັງກິດ/ຣັດເຊຍ
Language	: Lao / English/ Russia
ຕຳແໜ່ງ	: ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Member (Independent Member)

ປະຫວັດການສຶກສາ/ Education :

ປີ 1983	: ປະລິນຍາຕີ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
Year 1983	: Bachelor Degree in National Economics Planning Britain and USSR
ປີ 1984	: ປະລິຍາໂທ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
Year 1983	: Master Degree in National Economics Planning Britain and USSR

ປະຫວັດການເຮັດວຽກ / Experience :

ປີ 1984 - 1992	: ພະນັກງານວິຊາການ, ກະຊວງເສດຖະກິດ ແລະ ການລົງທຶນ
Year 1984 – 1992	: Academic Staff Ministry of Economy and Investment
ປີ 1992 – 2009	: ພະນັກງງານວິຊາການ, ທະນາຄານການຄ້າຕ່າງປະເທດລາວ
Year 1992 – 2009	: Academic Staff Lao Commercial Bank
ປີ 2009 – 2014	: ຮອງຜູ້ຈັດການສາຂາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Year 2009 - 2014	: Branch Deputy Manager Lao Commercial Bank
ປີ 2014 – 2015	: ຮອງຜູ້ຈັດການພະແນກບັນຊີ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Year 2009 - 2014	: Deputy Manager Accounting Division Lao Commercial Bank

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ແຜນທີ່ສະຖານທີ່ຈັດກອງປະຊຸມ

